ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------------

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ່ 2465 /ກປ

ນະຄອນຫຼວງວຽງຈັນ,ວັນທີ 23 JUL 2014

**ຂໍ້ຕົກລົງ**

**ຂອງລັດຖະມົນຕີ**

**ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ຄະນະວິຊາການ**

**ກອງເລຂາ ຮັບຜິດຊອບວຽກງານຂໍ້ມູນຂ່າວສານ ກະສິກຳ ແລະ ປ່າໄມ້.**

- ອີງຕາມດຳລັດຂອງລັດຖະມົນຕີ ສະບັບເລກທີ 262/ກປ,ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງກະສິກຳ ແລະ ປ່າໄມ້
- ອີງຕາມໃບສະເໜີຂອງກົມແຜນການ ແລະ ການຮ່ວມມື,ສະບັບເລກທີ 3687/ຕພວ ລົງວັນທີ 17-7-2014

**ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງຕົກລົງ**

ມາດຕາ 1. ແຕ່ງຕັ້ງຄະນະຊີ້ນຳ ແລະ ຄະນະວິຊາການ,ກອງເລຂາ ຮັບຜິດຊອບວຽກງານຂໍ້ມູນຂ່າວສານ ກະສິກຳ ແລະ ປ່າໄມ້ ດັ່ງລາຍລະອຽດລຸ່ມນີ້:

I. ຄະນະຊີ້ນຳ

1. ທ່ານ ດຣ ພອງປະຣິສັກ ປຣະວິງວຽງຄຳ ລັດຖະມົນຕີຊ່ວຍວ່າການກະຊວງ,ກປ ເປັນຫົວໜ້າ
2. ທ່ານ ໄຊປາເດດ ຈຸລະມະນີ ຫົວໜ້າກົມແຜນການ ແລະ ການຮ່ວມມື ເປັນຮອງ
3. ທ່ານ ຊູຊາດ ໄຊຍະກຸມມານ ຮອງຫົວໜ້າຫ້ອງການກະຊວງ ກປ ເປັນຄະນະ
4. ທ່ານ ຣສ ດຣ ລິນຄຳດວງສະຫວັນ ຮອງຫົວໜ້າ ສະຖາບັນຄົ້ນຄວ້າ ກປ ແຫ່ງຊາດ ເປັນຄະນະ
5. ທ່ານ ໂອແກ້ວ ສຸພັນທອນ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ
6. ທ່ານ ຄຳຕັນ ທາດາວົງ ຮອງຫົວໜ້າກົມປູກຝັງ ເປັນຄະນະ
7. ທ່ານ ສົມພອນ ແກ້ວຫາວົງ ຮອງຫົວໜ້າກົມກວດກາ ເປັນຄະນະ
8. ທ່ານ ສົມໄຊ ສີຊານົນ ຮອງຫົວໜ້າກົມສົ່ງເສີມ ແລະ ສະຫະກອນ ເປັນຄະນະ
9. ທ່ານ ຄຳໄມ ວົງສະຖຽນ ຮອງຫົວໜ້າກົມຊົນລະປະທານ ເປັນຄະນະ
10. ທ່ານ ປະພະກອນ ວົງໄຊ ຮອງຫົວໜ້າກົມກວດກາປ່າໄມ້ ເປັນຄະນະ
11. ທ່ານ ກ້ວາງ ດວງສີລາ ຮອງຫົວໜ້າກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ເປັນຄະນະ
12. ທ່ານ ທອງແອັດ ໄພວັນ ຮອງຫົວໜ້າກົມປ່າໄມ້ ເປັນຄະນະ
13. ທ່ານ ສີທອງ ພິພັກຄະວົງ ຮອງຫົວໜ້າກົມ ລ້ຽງສັດແລະການປະມົງ ເປັນຄະນະ

➢ **ໜ້າທີ່ຂອງຄະນະຊີ້ນຳ**

- ມີສິດໃນການຕັດສິນຊີ້ຂາດ ຕໍ່ກັບການກຳນົດແບບແຜນ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງຕະຫຼອດຮອດນະໂຍບາຍ ເພື່ອສະໜັບສະໜູນໃຫ້ວຽກງານດັ່ງກ່າວຂະຫຍາຍຕົວພາຍໃນຂອບເຂດກະຊວງກະສິກຳ ແລະ ປ່າໄມ້
- ມີສິດແຕ່ງຕັ້ງຜູ້ເຂົ້າຮ່ວມວຽກງານ ແລະ ສະເໜີທຶນຮອນຈາກລັດຖະບານ ໃນການປະກອບສ່ວນເຂົ້າໃນວຽກງານການພັດທະນາຂໍ້ມູນຂ່າວສານຍເທັກໂນໂລຢີປໄອຊີທີ) ກະຊວງກະສິກຳແລະປ່າໄມ້ເພື່ອຮັບປະກັນການນຳໃຊ້ລະບົບຂໍ້ມູນຂ່າວສານເທັກໂນໂລຢີພາຍໃນກະຊວງໃຫ້ມີປະສິດທິພາບ ແລະ ສະດວກຂຶ້ນ.
- ມີໜ້າທີ່ຊີ້ນຳວຽກງານໂດຍລວມ ເພື່ອໃຫ້ວຽກງານດັ່ງກ່າວເປັນໄປຕາມແນວທາງ ແລະ ກອບຂອງລະບຽບກົດໝາຍ ແລະ ຫຼັກການ ຂອງ ສປປ ລາວ
- ເປັນຜູ້ໂຄສະນາປະສານງານ ແລະ ເຜີຍແຜ່ວຽກງານທາງດ້ານຂໍ້ມູນຂ່າວສານເທັກໂນໂລຢີກະສິກຳ ແລະ ປ່າໄມ້ອອກສູ່ສັງຄົມວົງກວ້າງ ແລະ ເປັນເອກະພາບກັນຕໍ່ກັບແຜນການພັດທະນາໃນແຕ່ລະໄລຍະ.

## II. ຄະນະວິຊາການ

| | | | |
|---|---|---|---|
| 1. | ທ່ານ ສີສະຫວາດ ທອມດາລາ | ຮອງຫົວໜ້າພະແນກຄົ້ນຄວ້າສັງລວມ, ຫ້ອງການ ກປ | ເປັນຫົວໜ້າ |
| 2. | ທ່ານ ບຸນທະວີ ໄຊຍະເພັດ | ຫົວໜ້າພະແນກຄຸ້ມຄອງ ກົມຈັດຕັ້ງ ແລະ ພະນັກງານ | ເປັນຮອງ |
| 3. | ທ່ານ ນາງ ຈັນທອນ ແພງສັກດາ | ວິຊາການ ກົມຈັດຕັ້ງ ແລະ ພະນັກງານ | ເປັນຄະນະ |
| 4. | ທ່ານ ຄຳມະນີ ອຸດສາ | ຮອງຫົວໜ້າພະແນກບໍລິຫານ ແລະ ຈັດຕັ້ງ, ກົມກວດກາ | ເປັນຄະນະ |
| 5. | ທ່ານ ຫຼີ່ງຫຼ້ອງ ສິດທິໄຊ | ຫົວໜ້າຂະແໜງແຜນການແລະຮ່ວມມື, ກົມປູກຝັງ | ເປັນຄະນະ |
| 6. | ທ່ານ ນິພາພອນ ວັນນະລາດ | ຮອງຫົວໜ້າຂະແໜງແຜນການແລະຮ່ວມມື, ກົມປູກຝັງ | ເປັນຄະນະ |
| 7. | ທ່ານ ແສງສຸລີ ນາຍມະນີວົງ | ຮອງຫົວໜ້າຂະແໜງເຜີຍແຜ່ນຂໍ້ມູນຂ່າວສານ, ກສກສ | ເປັນຄະນະ |
| 8. | ທ່ານ ຄຳບາງ ຄູນວິທອງ | ວິຊາການໜ່ວຍງານເຜີຍແຜ່ຂໍ້ມູນຂ່າວສານ, ກສກສ | ເປັນຄະນະ |
| 9. | ທ່ານ ສຸລິວັນ ວໍລະວົງ | ຮອງຫົວໜ້າຂະແໜງ, ກົມຊົນລະປະທານ | ເປັນຄະນະ |
| 10. | ທ່ານ ແກ້ວອຸດອນ ແກ້ວພອນວິໄລ | ວິຊາການ ,ກົມຊົນລະປະທານ | ເປັນຄະນະ |
| 11. | ທ່ານ ສຸລີຍັນ ສີວິໄລ | ຫົວໜ້າໜ່ວຍງານຖານຂໍ້ມູນຂ່າວສານ, ກົມກວດກາປ່າໄມ້ | ເປັນຄະນະ |
| 12. | ທ່ານ ກອນລະສັກ ພົນລະເມືອງ | ວິຊາການໜ່ວຍງານຖານຂໍ້ມູນຂ່າວສານ, ກົມກວດກາປ່າໄມ້ | ເປັນຄະນະ |
| 13. | ທ່ານຊະນະລິດ ສີສຸລາດ | ຫົວໜ້າຂະແໜງຄຸ້ມຄອງຂໍ້ມູນຂ່າວສານ, ຄພດກ | ເປັນຄະນະ |
| 14. | ທ່ານ ແສງເດືອນ ສີວິໄລ | ຮອງຫົວໜ້າຂະແໜງຄຸ້ມຄອງ ຂໍ້ມູນຂ່າວສານ, ຄພດກ | ເປັນຄະນະ |
| 15. | ສົມພາວີ ແກ້ວກາ | ວິຊາການພະແນກແຜນການ ,ກົມປ່າໄມ້ | ເປັນຄະນະ |
| 16. | ທ່ານ ອຸ່ນເຮືອນ ມະນີວົງສີ | ວິຊາການພະແນກແຜນການ ,ກົມປ່າໄມ້ | ເປັນຄະນະ |
| 17. | ທ່ານ ນີລັນ ສົມວິຈິດ | ຫົວໜ້າຂະແໜງສະຖິຕິແລະຂໍ້ມູນຂ່າວສານ,ກລປ | ເປັນຄະນະ |
| 18. | ທ່ານ ນາງ ອ່ອນຄຳ ອິນສົມວິໄລ | ຮອງຫົວໜ້າຂະແໜງສະຖິຕິແລະຂໍ້ມູນຂ່າວສານ,ກລປ | ເປັນຄະນະ |
| 19. | ທ່ານ ອາລຸນ ໄຊອ່ອນຕາ | ຫົວໜ້າຂະແໜງປຸງແຕ່ງຂໍ້ມູນສະຖິຕິ,ກົມແຜນການ | ເປັນຄະນະ |

➢ **ໜ້າທີ່ຂອງຄະນະວິຊາການ**

- ມີສິດໄດ້ຮັບການສະໜັບສະໜູນນະໂຍບາຍ ການຍົກລະດັບທາງດ້ານຄວາມຮູ້ ແລະ ຄວາມສາມາດ ໃນການຄຸ້ມຄອງວຽກງານຂໍ້ມູນຂ່າວສານ ເທັກໂນໂລຢີຂອງກົມ ທີ່ຕົນສັງກັດຢູ່ຈາກພາກສ່ວນຕ່າງໆ.

- ມີສິດສະເໜີແນວທາງ ແລະ ປະກອບຄຳຄິດເຫັນໃນການພັດທະນາລະບົບຂໍ້ມູນຂ່າວສານເທັກໂນໂລຢີ ຂອງກະຊວງກະສິກຳ ແລະ ປ່າໄມ້ຕໍ່ກັບຄະນະຊີ້ນຳ ແລະ ກົມກອງທີ່ຕົນສັງກັດຢູ່.
- ມີໜ້າທີ່ຄຸ້ມຄອງລະບົບການເຊື່ອມຕໍ່ ແລະ ການນຳໃຊ້ຂໍ້ມູນຂ່າວສານເທັກໂນໂລຢີພາຍໃນກົມກອງຂອງຕົນ ເພື່ອຮັບປະກັນຂອງການບໍລິການ ແລະ ການນຳໃຊ້ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ.
- ມີໜ້າທີ່ໃຫ້ການສະໜັບສະໜູນ ແລະ ເອື້ອອຳນວຍຄວາມສະດວກໃຫ້ແກ່ຜູ້ຊົມໃຊ້ພາຍໃນກົມກອງຂອງຕົນ ຕໍ່ກັບການນຳໃຊ້ລະບົບເຄືອຂ່າຍຂໍ້ມູນຂ່າວສານເທັກໂນໂລຢີ ທີ່ມີທາງພາຍໃນແລະພາຍນອກໃຫ້ໄດ້ຮັບໝາກຜົນຕາມເປົ້າມາຍແຜນການທີ່ວາງໄວ້.
- ມີໜ້າທີ່ຊອກຮູ້ ແລະ ພດທະນາການນຳໃຊ້ລະບົບເຄືອຂ່າຍຂໍ້ມູນຂ່າວສານເທັກໂນໂລຢີ ຂອງຕົນຕາມຄວາມເໝາະສົມ ແລະ ເງື່ອນໄຂ ເພື່ອເຮັດໃຫ້ລະບົບພາຍໃນມີການຮັບປະກັນ ແລະ ພັດທະນາໄປແຕ່ລະໄລຍະ.
- ມີໜ້າທີ່ປະສານສົມທົບ ແລະ ຂໍຂໍ້ຊີ້ແຈ້ງ ຈາກກອງເລຂາ ແລະ ຜູ້ຮັບຜິດຊອບວຽກງານສະເພາະເພື່ອເຮັດໃຫ້ການນຳໃຊ້ຂອງຜູ້ຊົມໃຊ້ພາຍໃນກົມກອງຂອງຕົນໃດ້ຮັບໄດ້ມີປະສິດທິພາບຕາມເທົ່າທີ່ຄວນ.
- ມີໜ້າທີ່ຂື້ນແຜນໃນການບູລະນະຮັກສາອຸປະກອນໃນການເຊື່ອມຕໍ່ເຄືອຂ່າຍພາຍໃນຕໍ່ກັບການຈັດຕັ້ງຂອງຕົນ ເພື່ອເຮັດໃຫ້ການບໍລິຫານ ແລະ ນຳໃຊ້ລະບົບເຄືອຂ່າຍຂໍ້ມູນຂ່າວສານເທັກໂນໂລຢີໄດ້ມີປະສິດທິພາບ ແລະ ເປັນປົກກະຕິ.

## III. ກອງເລຂາ

| | | | |
|---|---|---|---|
| 1. | ທ່ານ ມະໂນລັກ ບຸນສີຫາລາດ | ຮອງຫົວໜ້າສູນຄົ້ນຄວ້ານະໂຍບາຍ ສຄກປ ແຫ່ງຊາດ | ເປັນຫົວໜ້າ |
| 2. | ທ່ານ ນາງ ພິມມະສອນ ໄຊມົນຕີຣ | ຮອງຫົວໜ້າພະແນກແຜນການ,ກພຮ | ເປັນຮອງ |
| 3. | ທ່ານ ພອນປະເສີດ ວົງສີປະສົມ | ຫົວໜ້າໜ່ວຍງານ ໄອຊີທີ, ສຄກປ ແຫ່ງຊາດ | ເປັນຄະນະ |
| 4. | ທ່ານ ວຽງສາຄອນ ພັນທະມູສີ | ວິຊາການ ໄອຊີທີ ກົມແຜນການ ແລະ ການຮ່ວມມື | ເປັນຄະນະ |

➢ ໜ້າທີ່ກອງເລຂາ

- ມຮວສິດໃນການກຳນົດ,ສະເໜີບັນຫາ ແລະ ແນວທາງແກ້ໄຂຂອງວຽກງານຂໍ້ມູນຂ່າວສານເທັກໂນໂລຢີກະສິກຳ (ໄອຊີທີ) ໃຫ້ແກ່ຄະນະຊີ້ນຳເພື່ອຕັດສິນ
- ມີສິດພິຈາລະນາ ແລະ ກວດສອບຄວາມຖືກຕ້ອງທາງດ້ານວິຊາການຕໍກັບລະບຽບການ ແລະ ຫຼັກການອັນເໝາະສົມໃນການຈັດຕັ້ງປະຕິບັດ ໂດຍລວມຂອງທາງຂັ້ນເທິງວາງອອກ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ເປັນໄປໃນທາງດຽວກັນ.
- ມີສິດຮັບນະໂຍບາຍ ແລະ ຍ້ອງຍໍຕ່າງໆ ຕາມໜ້າທີ່ວຽກງານທີ່ໄດ້ຖືກມອບໝາຍໃຫ້.
- ມີໜ້າທີ່ກຳນົດຮູບແບບ ເງື່ອນໄຂ ລະບຽບການ ຂອງການນຳໃຊ້ຂໍ້ມູນຂ່າວສານເທັກໂນໂລຢີໃນຂອບເຂດກະຊວງກະສິກຳ ແລະ ປ່າໄມ້ ເພື່ອເປັນມາດຖານອັນດຽວກັນ ເພື່ອຮັບປະກັນຄວາມສະດວກວ່ອງໄວ ໃນການເຂົ້າເຖິງແຫຼ່ງຂໍ້ມູນຂອງຜູ້ຊົມໃຊ້ທີ່ວກະຊວງ.
- ມຮໜ້າທີ່ດູແລບູລະນະຮັກສາອຸປະກອນ ລະບົບໃນການເຊື່ອມຕໍ່ຫຼັກໃຫ້ມີປະສິດທິພາບ ແລະ ຮັບປະກັນການນຳໃຊ້ໄດ້ທັນເວລາ.
- ມີໜ້າທີ່ຂື້ນແຜນກິດຈະກຳ ແລະ ງົບປະມານຂອງການຈັດຕັ້ງປະຕິບັດວຽກງານໂດຍລວມພາຍໃນກະຊວງກະສິກຳ ແລະ ປ່າໄມ້ເພື່ອຮັບປະກັນໃນການເຊື່ອມຕໍ່ຫຼັກ ແລະ ການບໍລິການຂໍ້ມູນຂ່າວສານເທັກໂນໂລຢີ ຂອງກະຊວງກະສິກຳ ແລະ ປ່າໄມ້ ມີຄວາມສະດວກ ແລະ ນຳໃຊ້ໄດ້ເປັນປົກກະຕິ.

- ມີໜ້າທີ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການພັດທະນາ ແລະ ແກ້ໄຂບັນຫາ ຂອງການນຳໃຊ້ລະບົບຂໍ້ມູນຂ່າວສານເທັກໂນໂລຢີ(ໄອຊີທີ) ຂອງກະຊວງກະສິກຳ ແລະ ປ່າໄມ້ ໃຫ້ມີປະສິດທິພາບໃນການນຳໃຊ້ໃຫ້ດີຂຶ້ນ.
- ມີໜ້າທີ່ສະໜັບສະໜູນໃຫ້ຄຳປຶກສາ ແລະ ເຜີຍແຜ່ຄວາມຮູ້ແກ່ບັນດາຄະນະວິຊາການຮ່ວມຂອງບັນດາກົມ, ກອງ, ສະຖາບັນອ້ອມຂ້າງ ເພື່ອເຮັດໃຫ້ການນຳໃຊ້ ການເຊື່ອມຕໍ່ຫຼັກ ສາມາດນຳໃຊ້ໄດ້ຢ່າງເປັນປົກກະຕິ.

ມາດຕາ 1: ມອບໃຫ້ກົມແຜນການ ແລະ ການຮ່ວມມື,ບັນດາທ່ານທີ່ຖືກແຕ່ງຕັ້ງຕາມມາດຕາ 1 ຈົ່ງໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ລາຍງານໃຫ້ຂັ້ນເທິງຊາບໃນເວລາອັນຄວນ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ຮອງ ລັດຖະມົນຕີວ່າການກະຊວງ ກະສິກຳ ແລະ ປ່າໄມ້

ດຣ. ເພັດ ພົມພິພັກ

ບ່ອນສົ່ງ:

- ກົມຈັດຕັ້ງ ແລະ ພະນັກງານ 1 ສະບັບ
- ກົມແຜນການ ແລະ ຮ່ວມມື 1 ສະບັບ
- ກົມກອງທີ່ກ່ຽວຂ້ອງບ່ອນລະ 1 ສະບັບ
- ທ່ານທີ່ຖືກແຕ່ງຕັ້ງຄົນລະ 1 ສະບັບ
- ເກັບມ້ຽນ 1 ສະບັບ